**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສໍານັກງານນາຍົກລັດຖະມົນຕີ** ເລກທີ 129 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 23 ກໍລະກົດ 2008

# ດໍາລັດ
# ວ່າດ້ວຍຊັ້ນ ຂອງນັກການທູດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ ສະບັບເລກທີ 3883/ ຕປທ.ຈພງ-2, ລົງວັນທີ 13 ມິຖຸນາ 2008;

## ນາຍົກລັດຖະມົນຕີ ອອກດໍາລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຊັ້ນ ແລະ ລະບຽບການຕ່າງໆ ສໍາລັບນັກການທູດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເປັນບ່ອນອີງໃຫ້ແກ່ການແຕ່ງຕັ້ງ, ສັບຊ້ອນ ແລະ ປະຕິບັດນະໂຍບາຍ ຕໍ່ນັກການທູດ, ແນໃສ່ເຮັດໃຫ້ຂະແໜງການຕ່າງປະເທດ ເຂົ້າສູ່ລະບຽບແບບແຜນ, ທັງສອດຄ່ອງກັບກົດໝາຍ ແລະ ປະເພນີສາກົນ, ເຮັດໃຫ້ການເຄື່ອນໄຫວວຽກງານຕ່າງປະເທດ ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2. ການອະທິບາຍຄໍາສັບ**

ຄໍາສັບຕ່າງໆໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

**ນັກການທູດ** ໝາຍເຖິງພະນັກງານ ລັດຖະກອນ ທີ່ມີຊັ້ນການທູດ ຢູ່ກະຊວງການຕ່າງປະເທດ ແລະ ສຳນັກງານຕາງໜ້າການທູດຂອງ ສປປ ລາວ ຢູ່ຕ່າງປະເທດ ນັບແຕ່ຊັ້ນອະນຸເລຂາ ຂຶ້ນໄປ.

**ຊັ້ນການທູດ** ໝາຍເຖິງຊັ້ນທີ່ກຳນົດໃຫ້ແກ່ ພະນັກງານ ລັດຖະກອນ ຂອງກະຊວງການຕ່າງປະເທດ ເພື່ອປະຕິບັດໜ້າທີ່ການທູດ ຢູ່ພາຍໃນ ແລະ ຕ່າງປະເທດ.

**ຊັ້ນກົງສຸນ** ໝາຍເຖິງຊັ້ນທີ່ກຳນົດໃຫ້ແກ່ພະນັກງານ ລັດຖະກອນ ທີ່ມີຊັ້ນການທູດ ແລະ ຖືກແຕ່ງຕັ້ງໄປປະຕິບັດໜ້າທີ່ປະຈຳສຳນັກງານກົງສຸນລາວ ຢູ່ຕ່າງປະເທດ.

## ໝວດທີ II
## ຊັ້ນການທູດ ແລະ ຊັ້ນກົງສຸນ

### ມາດຕາ 3. ຊັ້ນການທູດ

ຊັ້ນການທູດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບມີ 8 ຊັ້ນດັ່ງນີ້:

1. ເອກອັກຄະລັດຖະທູດ;
2. ອັກຄະລັດຖະທູດ;
3. ອັກຄະລັດຖະທູດ ທີ່ປຶກສາ;
4. ທີ່ປຶກສາ;
5. ເລຂານຸການເອກ;
6. ເລຂານຸການໂທ;
7. ເລຂານຸການຕີ;
8. ອະນຸເລຂາ.

### ມາດຕາ 4. ຊັ້ນກົງສຸນ

ຊັ້ນກົງສຸນປະກອບມີ 4 ຊັ້ນດັ່ງນີ້:

1. ກົງສຸນໃຫຍ່;
2. ກົງສຸນ;
3. ຮອງກົງສຸນ;
4. ພະນັກງານກົງສຸນ.

### ມາດຕາ 5. ການທຽບຊັ້ນກົງສຸນ ກັບຊັ້ນການທູດ

1. ກົງສຸນໃຫຍ່ ທຽບເທົ່າກັບ ອັກຄະລັດຖະທູດ ຫຼື ອັກຄະລັດຖະທູດທີ່ປຶກສາ ຫຼື ທີ່ປຶກສາ.
2. ກົງສຸນ ທຽບເທົ່າກັບ ເລຂານຸການເອກ.
3. ຮອງກົງສຸນ ທຽບເທົ່າກັບ ເລຂານຸການໂທ.
4. ພະນັກງານກົງສຸນ ທຽບເທົ່າກັບ ເລຂານຸການຕີ ຫຼື ອະນຸເລຂາ.

**ມາດຕາ 6. ການຮັກສາ ແລະ ປ່ຽນແປງຊັ້ນການທູດ**

1. ພະນັກງານ ລັດຖະກອນ ທີ່ມີຊັ້ນການທູດໃດໜຶ່ງໃນເມື່ອມີການຕົກລົງໃຫ້ໄປປະຈຳການ ຢູ່ ສຳນັກງານຕາງໜ້າການທູດ ແຫ່ງ ສປປ ລາວ ຢູ່ ຕ່າງປະເທດ ຈະໄດ້ຮັບການແຕ່ງຕັ້ງຕາມ ຊັ້ນການທູດນັ້ນ;
2. ໃນກໍລະນີທີ່ມີຄວາມຮຽກຮ້ອງຕ້ອງການ ແລະ ຄວາມຈຳເປັນຂອງໜ້າທີ່ວຽກງານ ການແຕ່ງຕັ້ງຊັ້ນການທູດໃດໜຶ່ງ ອາດຈະສູງກວ່າ ຫຼື ຕ່ຳກວ່າຊັ້ນເດີມ;
3. ນັກການທູດ ທີ່ມີຊັ້ນເອກອັກຄະລັດຖະທູດ ໃນເມື່ອມີການໂຍກຍ້າຍໄປປະຕິບັດໜ້າທີ່ຢູ່ຂະແໜງການອື່ນ ຫຼື ອອກຮັບບຳນານ ສາມາດຮັກສາຊັ້ນເອກອັກຄະລັດຖະທູດ ນັ້ນໄວ້.

## ໝວດທີ III
## ມາດຕະຖານ, ການຫຼຸບ, ເລື່ອນ ແລະ ປົດຊັ້ນຂອງນັກການທູດ

**ມາດຕາ 7. ມາດຕະຖານ ແລະ ເງື່ອນໄຂຂອງນັກການທູດ**

ນັກການທູດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນທີ່ມີເຊື້ອຊາດລາວ, ຖືສັນຊາດລາວ ແລະ ມີພູມລຳເນົາຢູ່ ສປປ ລາວ;
2. ມີຫຼັກໝັ້ນການເມືອງໜັກແໜ້ນ ແລະ ຈົງຮັກພັກດີຕໍ່ປະເທດຊາດ;
3. ກຳແໜ້ນ ແລະ ສາມາດຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ແລະລັດ;
4. ຮູ້ເຮັດວຽກງານນຳພາການເມືອງ-ແນວຄິດ, ມີສະຕິຕໍ່ການຈັດຕັ້ງ ແລະ ມີຄວາມຮັບຜິດຊອບສູງ;
5. ຮູ້ປຸກລະດົມຂົນຂວາຍ ແລະ ຍາດແຍ່ງການສະໜັບສະໜູນຈາກຕ່າງປະເທດ;
6. ໄດ້ຮັບການບຳລຸງວິຊາການຕ່າງປະເທດ;
7. ມີວິຊາສະເພາະ ແລະ ລະດັບທິດສະດີການເມືອງ;
8. ຮູ້ພາສາຕ່າງປະເທດ ທີ່ສາມາດນຳໃຊ້ໃນວຽກງານໄດ້ຢ່າງໜ້ອຍໜຶ່ງພາສາ;
9. ກຳແໜ້ນສະພາບ ແລະ ຈຸດພິເສດດ້ານປະຫວັດສາດ, ພູມສາດ, ວັດທະນະທຳ ແລະ ຮີດຄອງປະເພນີຂອງຊາດລາວ ແລະ ປະເທດທີ່ຕົນຮັບຜິດຊອບ;
10. ມີບົດຮຽນ ແລະ ປະສົບປະການໃນການເຄື່ອນໄຫວວຽກງານຕ່າງປະເທດ;
11. ມີມະນຸດສຳພັນ ແລະ ມີສຸຂະພາບແຂງແຮງ.

**ມາດຕາ 8. ມາດຕະຖານ ແລະ ເງື່ອນໄຂຂອງເອກອັກຄະລັດຖະທູດ**

ບຸກຄົນທີ່ຈະໄດ້ຮັບການແຕ່ງຕັ້ງເປັນເອກອັກຄະລັດຖະທູດ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ກໍາແໜ້ນ ແລະ ສາມາດຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ແລະ ລັດ ເປັນອັນລະອຽດ;
2. ຮູ້ເຮັດວຽກງານຈັດຕັ້ງ, ຊີ້ນໍາ ນໍາພາການເມືອງ-ແນວຄິດ ແລະ ວິຊາສະເພາະ;
3. ຮູ້ປຸກລະດົມຂົນຂວາຍ ແລະ ຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອ ຈາກຕ່າງປະເທດ ຕາມທິດ ການທູດຕິດພັນກັບເສດຖະກິດ;
4. ຈົບຊັ້ນສູງ ວິຊາສະເພາະໃດໜຶ່ງ ແລະ ໄດ້ຮັບການບໍາລຸງ ຫຼື ກໍ່ສ້າງທິດສະດີການເມືອງ;
5. ຮູ້ພາສາຕ່າງປະເທດທີ່ສາມາດນໍາໃຊ້ໃນວຽກງານໄດ້ຢ່າງໜ້ອຍໜຶ່ງພາສາ;
6. ເຄີຍດໍາລົງຕໍາແໜ່ງບໍລິຫານໃດໜຶ່ງ ເຊັ່ນ: ລັດຖະມົນຕີວ່າການ, ລັດຖະມົນຕີຊ່ວຍວ່າການ ຫຼື ທຽບເທົ່າ, ຜູ້ຊ່ວຍລັດຖະມົນຕີ, ຫົວໜ້າກົມ ຫຼື ຮອງຫົວໜ້າກົມ ຫຼື ຜູ້ມີຊັ້ນການທູດ ນັບແຕ່ ອັກຄະລັດຖະທູດທີ່ປຶກສາ ຂຶ້ນໄປ.

**ມາດຕາ 9. ມາດຕະຖານ ແລະ ເງື່ອນໄຂຂອງອັກຄະລັດຖະທູດ, ອັກຄະລັດຖະທູດທີ່ປຶກສາ ແລະ ທີ່ປຶກສາ**

ບຸກຄົນທີ່ຈະໄດ້ຮັບການແຕ່ງຕັ້ງເປັນອັກຄະລັດຖະທູດ, ອັກຄະລັດຖະທູດທີ່ປຶກສາ ຫຼື ທີ່ປຶກສາ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ກໍາແໜ້ນ, ຈັດຕັ້ງປະຕິບັດແນວທາງ, ນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງ ພັກ ແລະ ລັດ;
2. ຊ່ວຍຫົວໜ້າສໍານັກງານຕາງໜ້າການທູດເຮັດວຽກງານຈັດຕັ້ງ, ຊີ້ນໍານໍາພາການເມືອງ-ແນວຄິດ ແລະ ວິຊາສະເພາະ;
3. ຮູ້ເຮັດວຽກງານໂຄສະນາ ຂົນຂວາຍ ເພື່ອຍາດແຍ່ງການຊ່ວຍເຫຼືອ ຈາກບັນດາອົງການຈັດຕັ້ງສາກົນ;
4. ຈົບມະຫາວິທະຍາໄລໃດໜຶ່ງ ແລະ ໄດ້ຮັບການຝຶກອົບຮົມວຽກງານຕ່າງປະເທດ, ມີລະດັບທິດສະດີການເມືອງຊັ້ນສູງ, ມີລະດັບພາສາຕ່າງປະເທດ ທີ່ສາມາດນໍາໃຊ້ໃນວຽກງານໄດ້ ຢ່າງໜ້ອຍໜຶ່ງພາສາ;
5. ຮູ້ວຽກງານການຄົ້ນຄວ້າ, ວິໄຈ, ຕີລາຄາ, ສະຫຼຸບສັງລວມ ແລະ ຂຽນວິທະຍາບົດໃນຫົວຂໍ້ໃດໜຶ່ງທີ່ເປັນບົດຮຽນ;
6. ເຄີຍດໍາລົງຕໍາແໜ່ງບໍລິຫານໃດໜຶ່ງ ເຊັ່ນ: ຫົວໜ້າກົມ, ຮອງຫົວໜ້າກົມ ຫຼື ຫົວໜ້າພະແນກ ຫຼື ຜູ້ມີຊັ້ນການທູດນັບແຕ່ ເລຂານຸການເອກ ຂຶ້ນໄປ.

**ມາດຕາ 10. ມາດຕະຖານ ແລະ ເງື່ອນໄຂຂອງເລຂານຸການເອກ ແລະ ເລຂານຸການໂທ**

ບຸກຄົນທີ່ຈະໄດ້ຮັບການແຕ່ງຕັ້ງເປັນ ເລຂານຸການເອກ ແລະ ເລຂານຸການໂທຕ້ອງມີ ມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ກໍາແໜ້ນ, ໝູນໃຊ້ຢ່າງຖືກຕ້ອງແນວທາງ, ນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງ ພັກ ແລະ ລັດ;

2. ສາມາດເຮັດວຽກງານຈັດຕັ້ງ, ການເມືອງ - ແນວຄິດ ແລະ ແນະນຳ, ກວດກາດ້ານວິຊາການ ໃຫ້ພະນັກງານໃນຄວາມຮັບຜິດຊອບຂອງຕົນ;
3. ຮູ້ເຮັດວຽກງານໂຄສະນາ ຂົນຂວາຍ ເພື່ອຍາດແຍ່ງການຊ່ວຍເຫຼືອຈາກບັນດາອົງການຈັດຕັ້ງສາກົນ;
4. ຈົບມະຫາວິທະຍາໄລໃດໜຶ່ງ ແລະ ໄດ້ຮັບການຝຶກອົບຮົມວຽກງານຕ່າງປະເທດ, ຜ່ານການບຳລຸງ ຫຼື ກໍ່ສ້າງທິດສະດີການເມືອງ, ມີລະດັບພາສາຕ່າງປະເທດທີ່ສາມາດນຳໃຊ້ໃນວຽກງານໄດ້ຢ່າງໜ້ອຍໜຶ່ງພາສາ;
5. ຮູ້ວຽກງານການຄົ້ນຄວ້າ, ຕີລາຄາ, ສະຫຼຸບສັງລວມ, ຂຽນເອກະສານທາງການ ແລະ ຂຽນວິທະຍານິດໃນຫົວຂໍ້ໃດໜຶ່ງທີ່ເປັນບົດຮຽນ;
6. ເຄີຍດຳລົງຕຳແໜ່ງບໍລິຫານຂັ້ນຫົວໜ້າພະແນກ, ຮອງຫົວໜ້າພະແນກ ຫຼື ວິຊາການທີ່ມີຄວາມຊຳນານງານ ຫຼື ຜູ້ມີຊັ້ນການທູດ ເລຂານຸການຕີ ຂຶ້ນໄປ.

**ມາດຕາ 11. ມາດຕະຖານ ແລະ ເງື່ອນໄຂຂອງເລຂານຸການຕີ ແລະ ອະນຸເລຂາ**

ບຸກຄົນທີ່ຈະໄດ້ຮັບການແຕ່ງຕັ້ງເປັນ ເລຂານຸການຕີ ແລະ ອະນຸເລຂາ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ກຳໄດ້ແນວທາງ, ນະໂຍບາຍພາຍໃນ ແລະ ຕ່າງປະເທດຂອງພັກ ແລະ ລັດ;
2. ຮູ້ເຮັດວຽກງານໂຄສະນາ ຂົນຂວາຍ ເພື່ອຍາດແຍ່ງການຊ່ວຍເຫຼືອຈາກບັນດາອົງການຈັດຕັ້ງສາກົນ;
3. ຈົບປະລິນຍາຕີ ຫຼື ຊັ້ນສູງວິຊາສະເພາະໃດໜຶ່ງ ແລະ ໄດ້ຮັບການຝຶກອົບຮົມວຽກງານຕ່າງປະເທດ, ຜ່ານການບຳລຸງ ຫຼື ກໍ່ສ້າງທິດສະດີການເມືອງ, ມີລະດັບພາສາຕ່າງປະເທດ ທີ່ສາມາດນຳໃຊ້ໃນວຽກງານໄດ້ຢ່າງໜ້ອຍໜຶ່ງພາສາ;
4. ຮູ້ສ້າງແຜນການເຄື່ອນໄຫວວຽກງານ, ສະຫຼຸບສັງລວມ, ຂຽນເອກະສານທາງການ, ສະຫຼຸບບົດຮຽນ ແລະ ປະສົບການໃນການເຄື່ອນໄຫວວຽກງານຂອງຕົນ;
5. ເປັນລັດຖະກອນສົມບູນຂອງກະຊວງການຕ່າງປະເທດ 2 ປີ ຂຶ້ນໄປ ແລະ ເປັນຜູ້ມີຄວາມບຸກບືນ, ຫ້າວຫັນ ແລະ ຕັ້ງໜ້າຝຶກຝົນຕົນເອງ.

**ມາດຕາ 12. ສິດໃນການແຕ່ງຕັ້ງນັກການທູດ**

1. ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ຈະໄດ້ຮັບການແຕ່ງຕັ້ງໂດຍ ປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ, ບົນພື້ນຖານການຄົ້ນຄວ້ານຳສະເໜີ ຂອງ ລັດຖະມົນຕີວ່າການກະຊວງການຕ່າງປະເທດ.
2. ຊັ້ນນັກການທູດຖັດລົງໄປນັ້ນ ແມ່ນລັດຖະມົນຕີວ່າການກະຊວງການຕ່າງປະເທດ ຈະເປັນຜູ້ແຕ່ງຕັ້ງ.

3. ໃນກໍລະນີທີ່ມີຄວາມຮຽກຮ້ອງຕ້ອງການຂອງວຽກງານ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ສະເໜີນາຍົກລັດຖະມົນຕີແຕ່ງຕັ້ງ ເອກອັກຄະລັດຖະທູດປະຈຳກະຊວງ.

**ມາດຕາ 13. ກຳນົດເວລາພິຈາລະນາເລື່ອນຊັ້ນການທູດ**

1. ຊັ້ນການທູດ ອະນຸເລຂາ ແລະ ເລຂານຸການຕີ ແມ່ນ 3 ປີ.
2. ຊັ້ນການທູດ ເລຂານຸການໂທ ແລະ ເລຂານຸການເອກ ແມ່ນ 4 ປີ.
3. ຊັ້ນການທູດ ທີ່ປຶກສາ ຂຶ້ນໄປ ແມ່ນອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຕົວຈິງ, ແຕ່ບໍ່ໃຫ້ໄວກວ່າ 2 ປີ.
4. ສຳລັບຜູ້ທີ່ມີຄວາມສາມາດ, ມີຜົນງານໂດດເດັ່ນ ແລະ ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຈະໄດ້ຮັບການພິຈາລະນາເລື່ອນຊັ້ນກ່ອນກຳນົດ, ແຕ່ບໍ່ໃຫ້ໄວກວ່າ 2 ປີ.

**ມາດຕາ 14. ການໃຫ້ຊັ້ນການທູດສຳລັບຂະແໜງການອື່ນ**

1. ພະນັກງານ ລັດຖະກອນຂອງຂະແໜງການອື່ນ ທີ່ຖືກໂຍກຍ້າຍມາສັງກັດກະຊວງການຕ່າງປະເທດ ຈະໄດ້ຮັບການພິຈາລະນາໃຫ້ຊັ້ນການທູດໃດໜຶ່ງຕາມມາດຕະຖານ ແລະ ເງື່ອນໄຂທີ່ກຳນົດໄວ້ໃນດຳລັດສະບັບນີ້.
2. ພະນັກງານ ລັດຖະກອນຂອງຂະແໜງການອື່ນ ໃນເມື່ອໄດ້ຮັບການຕົກລົງເຫັນດີໃຫ້ໄປ ປະຕິບັດໜ້າທີ່ວິຊາສະເພາະ ຢູ່ສຳນັກງານຕາງໜ້າການທູດ ແຫ່ງ ສປປ ລາວ ທີ່ຕ່າງປະເທດ ຈະໄດ້ຮັບການພິຈາລະນາແຕ່ງຕັ້ງໃຫ້ຊັ້ນການທູດໃດໜຶ່ງ ຕາມຄວາມເໝາະສົມ. ພາຍຫຼັງໝົດກຳນົດການປະຕິບັດໜ້າທີ່ ແລະ ກັບຄືນປະເທດ ຊັ້ນການທູດນັ້ນ ຈະສິ້ນສຸດລົງ.

**ມາດຕາ 15. ການໂຈະການເລື່ອນຊັ້ນ ແລະ ປົດຊັ້ນການທູດ**

1. ຜູ້ທີ່ມີຄວາມຜິດໃນຮູບການກ່າວເຕືອນ ຈະຖືກໂຈະການພິຈາລະນາໃຫ້ຊັ້ນ ຫຼື ເລື່ອນຊັ້ນການທູດ.
2. ຜູ້ທີ່ມີຄວາມຜິດຖືກລົງວິໄນຂັ້ນສອງ ແລະ ສາມຂອງລະບຽບລັດຖະກອນ ຈະຖືກປົດຊັ້ນການທູດ.

## ໝວດທີ IV
## ພັນທະ, ໜ້າທີ່, ສິດ ແລະ ຂໍ້ຫ້າມສຳລັບນັກການທູດ

**ມາດຕາ 16. ພັນທະ ແລະ ໜ້າທີ່ຂອງນັກການທູດ**

ນອກຈາກພັນທະ ແລະ ໜ້າທີ່ພື້ນຖານຂອງລັດຖະກອນແລ້ວ ນັກການທູດ ຍັງມີພັນທະ ແລະ ໜ້າທີ່ ດັ່ງນີ້:

1. ມີຄວາມຈົງຮັກພັກດີ, ຊື່ສັດບໍລິສຸດຕໍ່ປະເທດຊາດ ແລະ ປະຊາຊົນຢ່າງເດັດດ່ຽວ;
2. ມີຄວາມເປັນເອກະພາບສູງຕໍ່ທັດສະນະແນວທາງລວມ ແລະ ແນວທາງການຕ່າງປະເທດຂອງພັກ - ລັດ;
3. ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ກຽມພ້ອມປະຕິບັດຕາມມະຕິ, ຄໍາສັ່ງຂອງຂັ້ນເທິງ, ເຄົາລົບກົດໝາຍ ແລະ ລະບຽບທາງລັດຖະການຢ່າງເຂັ້ມງວດ;
4. ມີສະຕິລະວັງຕົວຢູ່ສະເໝີ, ຈໍາແນກມິດ - ສັດຕູຈະແຈ້ງ, ເດັດດ່ຽວປົກປ້ອງສິດຜົນປະໂຫຍດ, ຄວາມລັບ ແລະ ກຽດສັກສີຂອງຊາດ ກໍຄືຂອງນັກການທູດ;
5. ປົກປັກຮັກສາ ແລະ ເສີມຂະຫຍາຍການພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ແນໃສ່ສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ;
6. ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ແລະ ຮໍ່າຮຽນເພື່ອຍົກລະດັບຄວາມຮູ້ ແລະ ຄວາມສາມາດ ດ້ານການເມືອງ, ວິຊາສະເພາະ ແລະ ພາສາຕ່າງປະເທດ.

**ມາດຕາ 17. ສິດຂອງນັກການທູດ**

ນັກການທູດມີສິດ ດັ່ງນີ້:

1. ມີສິດຄືກັນກັບລັດຖະກອນຕາມທີ່ໄດ້ກໍານົດໄວ້ໃນ ດໍາລັດວ່າດ້ວຍລະບຽບລັດຖະກອນ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
2. ນໍາໃຊ້ຊັ້ນການທູດຂອງຕົນເຂົ້າໃນການຕິດຕໍ່ພົວພັນ ແລະ ເຄື່ອນໄຫວວຽກງານທາງລັດຖະການ ຢູ່ພາຍໃນ ແລະ ຕ່າງປະເທດ;
3. ນັກການທູດຝ່າຍການເມືອງທີ່ປະຈໍາການຢູ່ສໍານັກງານຕາງໜ້າການທູດ ທີ່ ຕ່າງປະເທດມີສິດໄດ້ຮັບການແຕ່ງຕັ້ງໃຫ້ຮັກສາການແທນຊົ່ວຄາວ ໃນເວລາຫົວໜ້າສໍານັກງານ ບໍ່ຢູ່;
4. ໄດ້ຮັບເອກະສິດ, ອະພິສິດ ແລະ ການຄຸ້ມກັນທາງການທູດ ໃນເວລາປະຕິບັດໜ້າທີ່ການທູດຢູ່ຕ່າງປະເທດ ຕາມສົນທິສັນຍາ ແຫ່ງ ກຸງວຽນ ວ່າດ້ວຍ ການພົວພັນທາງການທູດ ສະບັບລົງວັນທີ 18 ເມສາ 1961 ແລະ ສົນທິສັນຍາ ແຫ່ງ ກຸງວຽນ ວ່າດ້ວຍ ການພົວພັນທາງການກົງສຸນ ສະບັບລົງວັນທີ 24 ເມສາ 1963.

**ມາດຕາ 18. ຂໍ້ຫ້າມຂອງນັກການທູດ**

1. ນັກການທູດ ຕ້ອງປະຕິບັດຕາມຂໍ້ຫ້າມຂອງລັດຖະກອນ ທີ່ໄດ້ກໍານົດໄວ້ໃນ ດໍາລັດ ວ່າດ້ວຍລະບຽບລັດຖະກອນ ແຫ່ງ ສປປ ລາວ.
2. ຫ້າມນັກການທູດສວຍໃຊ້ເອກະສິດ,ອະພິສິດແລະການຄຸ້ມກັນທາງການທູດເຂົ້າໃນຈຸດປະສົງອື່ນໆທີ່ຂັດກັບລະບຽບກົດໝາຍພາຍໃນ ແລະສົນທິສັນຍາແຫ່ງກຸງວຽນວ່າດ້ວຍ

ການພົວພັນທາງການທູດ ສະບັບລົງວັນທີ 18 ເມສາ 1961 ແລະ ສົນທິສັນຍາແຫ່ງວຽນນາ ວ່າດ້ວຍການພົວພັນທາງການກົງສຸນ ສະບັບລົງວັນທີ 24 ເມສາ 1963.

## ໝວດທີ V

## ບົດບັນຍັດສຸດທ້າຍ

**ມາດຕາ 19. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງການຕ່າງປະເທດ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້. ບັນດາກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານນາຍົກລັດຖະມົນຕີ, ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້.

**ມາດຕາ 20. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ຫຼື ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ